ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ
ທະບຽນເຂົ້າ
ເລກທີ...1 4 8 4....ກວຕ
ລົງວັນທີ...3 0 AUG 2013....
ເວລາ.......1 1 1 3....
ສົ່ງເຖິງ..........

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ນາຍົກລັດຖະມົນຕີ** ເລກທີ 220/ນຍ

ນະຄອນຫຼວງວຽງຈັນ, ວັນທີ 28.8.2013

# ດຳລັດ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງຄະນະກຳມະການປ້ອງກັນ ແລະ ຄວບຄຸມໄພພິບັດແຫ່ງຊາດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ໜັງສືສະເໜີ ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສະບັບເລກທີ 2356/ຮສສ, ລົງວັນທີ 20 ມິຖຸນາ 2013;
- ອີງຕາມ ໜັງສືສະເໜີ ຂອງກະຊວງພາຍໃນ ສະບັບເລກທີ 285/ພນ, ລົງວັນທີ 30 ກໍລະກົດ 2013.

**ນາຍົກລັດຖະມົນຕີ ອອກດຳລັດ:**

## ໝວດທີ I
## ບົດບັນຍັດທົ່ວໄປ

ມາດຕາ 1. ຈຸດປະສົງ

ດຳລັດສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ ຂອງຄະນະກຳມະການປ້ອງກັນ ແລະ ຄວບຄຸມໄພພິບັດແຫ່ງຊາດ (ຄປພຊ) ເພື່ອຈັດຕັ້ງປະຕິບັດແຜນຍຸດທະສາດ ແລະ ແຜນດຳເນີນງານ ກ່ຽວກັບວຽກງານຄຸ້ມຄອງໄພພິບັດໃຫ້ມີປະສິດທິຜົນສູງ.

ມາດຕາ2. ທີ່ຕັ້ງ ແລະ ພາລະບົດບາດ

ຄະນະກຳມະການປ້ອງກັນ ແລະ ຄວບຄຸມໄພພິບັດແຫ່ງຊາດ ແມ່ນອົງການຈັດຕັ້ງ ບໍ່ປະຈຳການຂອງລັດຖະບານ, ມີພາລະບົດບາດເປັນເສນາທິການ ແລະ ຊ່ວຍລັດຖະບານ ໃນການຄຸ້ມຄອງ, ປ້ອງກັນ, ຕອບໂຕ້ ແລະ ແກ້ໄຂຜົນຮ້າຍຈາກໄພພິບັດທຳມະຊາດ, ໄພພິບັດທີ່ມະນຸດສ້າງຂຶ້ນ ທີ່ກະທົບຕໍ່ການພັດທະນາເສດຖະກິດ-ສັງຄົມ, ຕໍ່ຊັບສິນ ແລະ ຊີວິດ ຂອງປະຊາຊົນ ໃນຂອບເຂດທົ່ວປະເທດ.

ມາດຕາ3. ອະທິບາຍຄຳສັບ

ໃນດຳລັດສະບັບນີ້ ມີຄວາມໝາຍ ຂອງບັນດາຄຳສັບດັ່ງລຸ່ມນີ້:

1. **ໄພພິບັດ** ໝາຍເຖິງສິ່ງທີ່ເປັນໄພອັນຕະລາຍເກີດຈາກທຳມະຊາດ ຫລື ຈາກນຳ້ມືຂອງມະນຸດ (ລົມພະຍຸ, ນຳ້ຖ້ວມ, ແຫ້ງແລ້ງ, ແຜ່ນດິນໄຫວ, ດິນເຈື່ອນ, ສັດຕູພືດ, ພະຍາດລະບາດຮ້າຍແຮງ, ອັກຄີໄພ, ສົງຄາມ ແລະ ອື່ນໆ) ກໍ່ໃຫ້ເກີດ ມີຜົນເສຍຫາຍ ຢ່າງຮ້າຍແຮງຕໍ່ຊີວິດ ແລະ ຊັບສິນ ຂອງປະຊາຊົນ ແລະ ຂອງລັດ.
2. **ການປ້ອງກັນ ແລະ ຄວບຄຸມໄພພິບັດ** ໝາຍເຖິງວຽກງານປ້ອງກັນ, ກຽມພ້ອມ, ຫລຸດຜ່ອນຜົນກະທົບ, ການຊ່ວຍເຫຼືອຕອບໂຕ້ສຸກເສີນ, ການສ້ອມແປງ ແລະ ກໍ່ສ້າງຄືນໃໝ່ ແລະ ແກ້ໄຂຜົນຮ້າຍ ທີ່ເກີດຂຶ້ນຈາກໄພພິບັດຕ່າງໆ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

ມາດຕາ4. ໜ້າທີ່

1. ຊີ້ນຳຄົ້ນຄ້ວາ ແລະ ຮັບຮອງເອົາແຜນຍຸດທະສາດ, ແຜນປະຕິບັດງານ ແລະ ຮ່າງບັນດານິຕິກຳຕ່າງໆ ກ່ຽວກັບການຄຸ້ມຄອງໄພພິບັດ ເພື່ອສະເໜີຕໍ່ລັດຖະບານ ຫລື ອົງການ ທີ່ມີສິດອຳນາດອະນຸມັດ;
2. ຊີ້ນຳຄົ້ນຄວ້າສ້າງແຜນການ, ກຳນົດກົນໄກ, ວິທີການພົວພັນປະສານງານ ເພື່ອປ້ອງກັນ, ຮັບມືກັບໄພພິບັດ ແລະ ແກ້ໄຂຜົນຮ້າຍ ທີ່ເກີດຈາກໄພພິບັດ ໃນຂອບເຂດທົ່ວປະເທດ;
3. ຊຸກຍູ້ບັນດາກະຊວງ, ອົງການທຽບເທົ່າຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຜັນຂະຫຍາຍແຜນຍຸດທະສາດ, ແຜນປະຕິບັດງານ ກ່ຽວກັບການຄຸ້ມຄອງໄພພິບັດ ເຊື່ອມເຂົ້າໃນແຜນການເຄື່ອນໄຫວ ປະຈຳປີ, 05 ປີ ຂອງຕົນ; ຊຸກຍູ້ຂະແໜງການສຶກສານຳເອົາເນື້ອໃນວຽກງານ ຫຼຸດຜ່ອນຄວາມສ່ຽງຕໍ່ໄພພິບັດ, ການປ້ອງກັນ ແລະ ການແກ້ໄຂຜົນຮ້າຍ ທີ່ເກີດຈາກໄພພິບັດ ເຂົ້າໃນຫຼັກສູດ, ຕຳລາການຮຽນ, ການສິດສອນ ຢູ່ໃນໂຮງຮຽນ;
4. ເມື່ອມີໄພພິບັດເກີດຂຶ້ນລາຍງານຢ່າງຮີບດ່ວນ, ທັນການໃຫ້ແກ່ລັດຖະບານ ແລະ ຫ້ອງວ່າການສູນກາງພັກ ກ່ຽວກັບສະຖານະການ, ຄວາມຮ້າຍແຮງ, ການສູນເສຍຊີວິດ ແລະ ຊັບສິນຂອງລັດ, ລວມໝູ່ ແລະ ປະຊາຊົນ ພ້ອມທັງສະເໜີຂໍອະນຸມັດແຜນການຊ່ວຍເຫຼືອ, ແກ້ໄຂຜົນຮ້າຍ ໃນຂັ້ນຕົ້ນ;
5. ຊີ້ນຳຈັດຕັ້ງປະຕິບັດແຜນການ, ມາດຕະການ, ເຕັກນິກວິຊາການຕ່າງໆ ເພື່ອການຄົ້ນຫາ ແລະ ກູ້ໄພ, ໃຫ້ການຊ່ວຍເຫຼືອ ບັນເທົາທຸກສຸກເສີນແກ່ເປົ້າໝາຍຕ່າງໆ ທີ່ໄດ້ຮັບເຄາະຮ້າຍ ຈາກໄພພິບັດ; ສົມທົບກັບພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ເພື່ອຟື້ນຟູສະພາບຈິດໃຈ, ພື້ນຖານວັດຖຸ-ເຕັກນິກ ແລະ ອື່ນໆ ຫລັງໄພພິບັດ ໃຫ້ເຂົ້າສູ່ສະພາບປົກກະຕິໂດຍໄວ;